# Providence ElderPlace PACE ແມ່ນຫຍັງ? (ໂຄງການເບິ່ງແຍງສຸຂະພາບແບບຄົບວົງຈອນສໍາລັບຜູ້ສູງອາຍຸ)?

ໂຄງການນີ້ສະໜອງການເບິ່ງແຍງແລະບໍລິການດ້ານສຸະພາບທີ່ຄຸ້ມຄອງໂດຍ Medicare ແລະ Medicaid ເຊິ່ງອະນຸມັດໂດຍທີມແພດ, ນັກສັງຄົມສົງເຄາະ, ພະຍາບານ, ນັກກາຍຍະພາບ ແລະ ກິດຈະກໍາບໍາບັດ, ແລະ ແພດຝ່າຍຮັກສາອື່ນໆ ທີ່ກ່ຽວຂ້ອງໃນການສະໜອງການເບິ່ງແຍງສຸຂະພາບ.
ເພີ່ມມີການສະໜອງການເບິ່ງແຍງແລະການບໍລິການດ້ານສຸຂະພາບ ທີ່ຈໍາເປັນທາງການແພດເພີ່ມເຕີມອີກ ເຊັ່ນ: ການເບິ່ງແຍງແຂ້ວ/ແຂ້ວປອມ, ການໄດ້ຍິນ/ເຄື່ອງຊ່ວຍການໄດ້ຍິນ, ການຮັກສາໂຣກຕີນ, ການກວດສາຍຕາ/ແວ່ນຕາ, ແລະ ການຮັກສາດ້ວຍຢາ ເຊິ່ງສັ່ງໂດຍໝໍປະຈໍາຂອງທ່ານ.

## **<u>ບັນດາບໍລິການຂອງ PACE ລວມມີ ແຕ່ບໍ່ໄດ້ຈໍາກັດດັ່ງຕໍ່ໄປນີ້:</u>**

- ການເບິ່ງແຍງທາງການແພດທີ່ເປັນຫຼັກ
- ການບໍລິການດ້ານການແພດພິເສດ
- ການເບິ່ງແຍງຢູ່ສະຖານພະຍາບານ
- ການເບິ່ງແຍງຢູ່ເຮືອນ
- ການບໍາບັດທາງກາຍຍະພາບ
- ການເບິ່ງແຍງແຂ້ວ
- ການບໍລິການສັງຄົມ
- ການເດີນທາງ
- ການເຂົ້າໂຮງໝໍ
- ການສັ່ງຢາ
- ການບໍລິການສຸກເສີນ
- ການບໍາບັດດ້ວຍການພັກຜ່ອນ
- ການບໍາບັດດ້ວຍກິດຈະກໍາ
- ການປຶກສາດ້ານໂພຊະນາການ
- ການບໍລິການຫ້ອງແລັບ/ເອັກສເຣ
- ການເບິ່ງແຍງສຸຂະພາບຈິດ

**Providence ElderPlace ສະໜອງການເດີນທາງແບບໄປກັບ** ມາຫາສູນ PACE ສໍາລັບກິດຈະກໍາ ຫຼື ການນັດພົບແພດ. ເພີ່ນຍັງມີການສະໜອງການເດີນທາງສໍາລັບການນັດພົບແພດນອກສູນ PACE.

Providence ElderPlace PACE ເນັ້ນໜັກໃສ່ **ການປ້ອງກັນໂຣກເພື່ອຊ່ວຍໃຫ້ທ່ານໃຊ້ຊີວິດໃນຊຸມຊົນ** ໃຫ້ຍືນຍາວທີ່ສຸດ.

## **<u>ໃຜສາມາດສະມັກເຂົ້າ PACE ໄດ້ແນ່?</u>**

- ຜູ້ທີ່ມີອາຍຸ 55 ປີ ຫຼື ສູງກວ່າ.
- ຜູ້ທີ່ອາໃສໃນເຂດບໍລິການຂອງອົງກອນ PACE
- ຜູ້ທີ່ຈໍາເປັນຕ້ອງໄດ້ຮັບການບໍລິການຊຸກຍູ້ ທີ່ນິຍາມໂດຍລັດວໍຊິງຕັນ
- ຜູ້ທີ່ສາມາດອາໃສຢ່າງປອດໄພໃນເຮືອນພັກຜູ້ສູງອາຍຸ

## **<u>ເງິນທີ່ທ່ານຕ້ອງຈ່າຍໃຫ້ PACE ແມ່ນຂຶ້ນກັບສະຖານະພາບດ້ານການເງິນຂອງທ່ານ</u>**

ຖ້າທ່ານມີຄຸນນະສົມບັດຜ່ານ Medicaid ທ່ານຈະໄດ້ຈ່າຍລາຍເດືອນ (ເງິນສົມທົບ) ຫຼື ບໍ່ໄດ້ຈ່າຍເລີຍ.
ຖ້າທ່ານຄຸນນະສົມບັດບໍ່ຜ່ານ Medicaid ທ່ານຕ້ອງໄດ້ຈ່າຍເບ້ຍລາຍເດືອນຄົງທີ່.
ມູນຄ່ານັ້ນບໍ່ປ່ຽນແປງຕາມຄວາມຈໍາເປັນຂອງທ່ານ.

**ຈະບໍ່ມີ ການຫັກເງິນ ຫຼື ການຈ່າຍຮ່ວມ ໃດໆ ສໍາລັບ ຄ່າຢາ**, **ການບໍລິການ**, **ອຸປະກອນພະຍຸງຜູ້ສູງອາຍຸ ຫຼື ການເບິ່ງແຍງ**ທີ່ຜ່ານການອະນຸມັດຈາກທີມງານ PACE ແລ້ວ.

ກະລຸນາໂທຫາ Providence ElderPlace ໄດ້ທີ່ **206-320-5325 / 1-844-901-0094** ສໍາລັບຂໍ້ມູນເພີ່ມເຕີມ

**ສົ່ງຂໍ້ຄວາມ 1-800-855-2880**